ລາຍງານກອງປະຊຸມ
ພັດທະນາເຄືອຂ່າຍການດຳເນີນງານເຝົ້າລະວັງພະຍາດຕິດຕໍ່ລະຫວ່າງສັດສູ່ຄົນ ພາຍໃຕ້ແນວຄິດສຸຂະພາບໜຶ່ງດຽວ
ຊາຍແດນ (One Health Border) ແຂວງສະຫວັນນະເຂດ ສປປ ລາວ-ຈັງຫວັດມຸກດາຫານ ຣາຊະອານາຈັກໄທ
ລະຫວ່າງວັນທີ 20-21 ທັນວາ 2017
ທີ່ພະແນກສາທາລະນະສຸກແຂວງສະຫວັນນະເຂດ

.....................

ທ່ານ ດຣ ຕຽງຄຳ ປ້ອງວິງສາ ຮອງຫົວໜ້າພະແນກສາທາລະນະສຸກແຂວງສະຫວັນນະເຂດ, ນາຍບັນຊາ ຜະລານຸວົງ ຜູ້ອຳນວຍການໂຮງພະຍາບານມຸກດາຫານ ເປັນປະທານຮ່ວມໃນພິທີເປີດກອງປະຊຸມຜູ້ເຂົ້າຮ່ວມປະຊຸມຈາກຈັງຫວັດມຸກດາຫານ ປະກອບດ້ວຍນາຍອະພິຣັກ ສຳຣານວົງ ນາຍສິດທິມາກ ວົງສຸຣະກຽດ ຮອງນາຍແພດສາທາລະນະສຸກຈັງຫວັດມຸກດາຫານຜູ້ແທນຈາກສຳນັກງານປະສຸສັດ ຈັງຫວັດມຸກດາຫານ ສາທາລະນະສຸກອຳເພີທຸກອຳເພີ ປະສຸສັດອຳເພີຫວ້ານໃຫຍ່ ແລະ ດອນຕານ ດ່ານຄວບຄຸມໂຣກຕິດຕໍ່ ລະຫວ່າງປະເທດຈັງຫວັດມຸກດາຫານ ທີມ One Health ຈັງຫວັດມຸກດາຫານຈຳນວນ 30 ທ່ານ ຜູ້ເຂົ້າຮ່ວມປະຊຸມຈາກແຂວງສະຫວັນນະເຂດ ປະກອບດ້ວຍພະແນກສາທາລະນະສຸກແຂວງສະຫວັນນະເຂດ ໂຮງໝໍແຂວງສະຫວັນນະເຂດ ຫົວໜ້າຂະແໜງລ້ຽງສັດ ແລະ ການປະມົງ ຮອງຫົວໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ຜູ້ເຂົ້າຮ່ວມຈາກແຂວງສະຫວັນນະເຂດ ຈຳນວນ 20 ທ່ານ (ຍິງ 3 ທ່ານ) ລວມຜູ້ເຂົ້າປະຊຸມທັງໝົດ 50 ທ່ານ (ຍິງ 11 ທ່ານ)

ຄວາມເປັນມາ ແລະ ຄວາມສຳຄັນ

ກອງປະຊຸມພັດທະນາເຄືອຂ່າຍການດຳເນີນງານເຝົ້າລະວັງພະຍາດຕິດຕໍ່ລະຫວ່າງສັດ ສູ່ ຄົນ ພາຍໃຕ້ແນວຄິດສຸຂະພາບໜຶ່ງດຽວຊາຍແດນ (One Health Border) ຈັງຫວັດມຸກດາຫານ- ແຂວງສະຫວັນນະເຂດ ເປັນການສ້າງຄວາມເຂັ້ມແຂງ ແລະ ພັດທະນາເຄືອຂ່າຍໃນການເຝົ້າລະວັງພະຍາດຕິດຕໍ່ຕາມແນວຊາຍແດນໂດຍມີຄວາມມຸ່ງຫວັງເພື່ອເຮັດໃຫ້ຄົນສຸຂະພາບດີ ສັດສຸຂະພາບດີ ແລະ ສິ່ງແວດລ້ອມປອດໄພ ເຊິ່ງເປັນການເຮັດວຽກຮ່ວມກັນທັງ 3 ຝ່າຍ; ເນັ້ນໃສ່ການມີສ່ວນຮ່ວມຂອງຊຸມຊົນ ປະຊາຊົນປອດໄພຈາກພະຍາດຕິດຕໍ່ລະຫວ່າງສັດສູ່ຄົນເຊັ່ນ : ພະຍາດໄຂ້ຫວັດສັດປີກ, ພະຍາດວໍ້, ພະຍາດແອນແທຣກ ລວມເຖິງພະຍາດຕິດຕໍ່ທີ່ອາດຈະເກີດຂຶ້ນໃໝ່ໂດຍໄດ້ຮັບທຶນສະໜັບສະໜູນງົບປະມານຈາກກົມຄວາມຮ່ວມມືລະຫວ່າງປະເທດ ກະຊວງການຕ່າງປະເທດ ຣາຊະອານາຈັກໄທ (THAILAND INTERNATIONAL COOPERATION AGENCY; TICA) ຮູບແບບກອງປະຊຸມ ບັນລະຍາຍຮັບຮູ້ແນວທາງການດຳເນີນງານ One Health (ສາທາລະນະສຸກ, ກະສິກຳ ປ່າໄມ້ ແລະ ພັດທະນາຊົນນະບົດ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ) ນຳສະເໜີຜົນການດຳເນີນງານ One Health ທີ່ຜ່ານມາແລກປ່ຽນຮຽນຮູ້ Best Practice ການພັດທະນາລະບົບຂໍ້ມູນ Website : www.msq-health.com ແຜນ ແລະ ມີການສຶກສາຄົ້ນຄວ້າແນວທາງການດຳເນີນງານປີ 2018 ແລະ ລະດົມຄວາມຄິດເຫັນຮ່ວມກັນໄລຍະເວລາກອງປະຊຸມ 2 ວັນ ລະຫວ່າງວັນທີ 20-21 ທັນວາ 2017 ທີ່ພະແນກສາທາລະນະສຸກແຂວງສະຫວັນນະເຂດ.

ສະຫຼຸບປະເດັນສຳຄັນຂອງກອງປະຊຸມ

ແຜນຍຸດທະສາດ ແລະ ແນວທາງການດຳເນີນງານດ້ານສຸຂະພາບໜຶ່ງດຽວ (One Health) ທີ່ກ່ຽວຂ້ອງແຂວງສະຫວັນນະເຂດ-ຈັງຫວັດມຸກດາຫານ ສະຫຼຸບປະເດັນສຳຄັນຈາກວິທະຍາກອນ ທີ່ຜ່ານມາຕ່າງຄົນຕ່າງເຮັດ (ສາທາລະນະສຸກ, ກະສິກຳ ປ່າໄມ້ ແລະ ພັດທະນາຊົນນະບົດ,ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ) ການປະສານງານຍັງບໍ່ຈະແຈ້ງ ການປະຊາສຳພັນເຖິງຊຸມຊົນຍັງບໍ່ທົ່ວເຖິງ ທັງສອງຝ່າຍເຫັນວ່າກອງປະຊຸມຄັ້ງນີ້ຈະສົ່ງຜົນໃຫ້ການເຮັດວຽກບັນລຸເປົ້າໝາຍຄືການສ້າງຄວາມເຂັ້ມແຂງຂອງທີມງານເຄືອຂ່າຍຄົນສຸຂະພາບດີ ສັດສຸຂະພາບດີ ສິ່ງແວດລ້ອມປອດໄພ ການເຮັດວຽກຮ່ວມກັນເນັ້ນຊຸມຊົນມີສ່ວນຮ່ວມ ການພັດທະນາເພື່ອບັນລຸແຜນຍຸດທະສາດ One Health ປະກອບດ້ວຍ :

1. ສ້າງຄວາມເຂັ້ມແຂງເຖິງຄວາມສຳຄັນ ແລະ ຄວາມຈຳເປັນຂອງການປະຍຸກໃຊ້ແນວຄິດເລື່ອງສຸຂະພາບໜຶ່ງດຽວໃນການກຽມຄວາມພ້ອມ ແລະ ການຮັບມື ການລະບາດຂອງພະຍາດຕິດຕໍ່.

2. ປະສານຄວາມຮ່ວມມືແຕ່ລະພາກສ່ວນໃນການລາຍງານການລະບາດພ້ອມສ້າງລະບົບມາດຕະຖານ ຂໍ້ມູນ ແລະ ນຳລະບົບເທັກໂນໂລຢີທີ່ທັນສະໄໝມາໃຊ້ເພື່ອການເຝົ້າລະວັງພະຍາດຕິດຕໍ່.

3. ພັດທະນາວຽກງານດ່ານລະຫວ່າງປະເທດລວມທັງດ່ານບໍລິເວນຊາຍແດນໂດຍການສົ່ງເສີມການປ້ອງກັນຄວບຄຸມພະຍາດໃນຄົນ, ສັດ ແລະ ສັດປ່າທີ່ບໍລິເວນຂາເຂົ້າ-ອອກປະເທດ

4. ເສີມສ້າງຄວາມເຂັ້ມແຂງຂອງລະບົບຕິດຕາມການລະບາດ ແລະ ມີການແຈ້ງເຕືອນໄພໃຫ້ກັບໜ່ວຍງານທີ່ກ່ຽວຂ້ອງຢ່າງໄວຕໍ່ສະຖານະການ

5. ປູກຈິດສຳນຶກການປະຕິບັດງານພາຍໃຕ້ແນວຄິດສຸຂະພາບໜຶ່ງດຽວໃນຊຸມຊົນ.

ການລະດົມຄວາມຄິດເຫັນໃນການພັດທະນາ Website ໂດຍນຳສະເໜີຜາບລວມການພັດທະນາ ແລະ ລາຍງານຄວາມກ້າວໜ້າ website ສະແດງຄວາມຄິດເຫັນເພີ່ມເຕີມດັ່ງນີ້:

1) ເພີ່ມກິດຈະກຳຂໍ້ມູນຂອງດ່ານຄວບຄຸມພະຍາດຕິດຕໍ່ລະຫວ່າງປະເທດ ໃຫ້ມີການບັນທຶກຜົນງານຈຳນວນຄັດກອງຜູ້ເດີນທາງເຂົ້າ-ອອກປະເທດ ຈຳນວນຂົນສົ່ງສິນຄ້າຜ່ານດ່ານ (ດ້ານສັດ) ແລະ ຜົນງານການດຳເນີນງານທີ່ດ່ານ (ດ້ານຄົນ ແລະ ສັດ) ຈຳນວນ 6 ດ່ານ (ມຸກດາຫານ 2 ດ່ານຄື: ດ່ານສະພານມິດຕະພາບ 2 ແລະ ດ່ານທ່າເຮືອເທດສະບານ , ສະຫວັນນະເຂດ 2 ດ່ານຄື: ດ່ານຂົວມິດຕະພາບ 2 ແລະ ດ່ານແດນສະຫວັນ, ຫວຽດນາມ 2 ດ່ານຄື : ດ່ານລາວບາວ ແລະ ດ່ານລາໄລ.

2) ເພີ່ມກິດຈະກຳຂໍ້ມູນ One Health ມີ 4 ລາຍການ ປະກອບດ້ວຍ:

2.1ສະຖານະການດ້ານພະຍາດໃນຄົນ 5 ພະຍາດ (Avian Influenza, Anthrax, Rabies, Leptospirosis, ແລະ Trichinosis).

2.2 ສະຖານະການດ້ານພະຍາດໃນສັດ

2.3 Event Base

2.4 ກິດຈະກຳດຳເນີນງານ ແລະ ຜົນງານຄວບຄຸມພະຍາດເຊັ່ນ: ການສັກຢາວັກຊີນໍ້ໃນສັດ ແລະ ຄົນ ແລະ ຜົນງານຄວາມຮ່ວມມືຮ່ວມກັນ.

3) ເພີ່ມຂໍ້ມູນດ້ານຄວາມຮູ້ KM (Knowledge Management) ລົງຜົນງານ Best Practice, ຜົນງານວິຊາການທີ່ເປັນປະໂຫຍດ ໂດຍລົງເປັນ pdf file ໃຫ້ Admin ແຕ່ລະປະເທດລົງເອງໄດ້ເລີຍ (ບໍ່ເກີນ 8 ໜ້າ)

4) ຂໍ້ມູນ 18 ພະຍາດເຮັດໄດ້ດີເປັນປັດຈຸບັນທັງ 3 ປະເທດ ໃຫ້ປັບປຸງເພີ່ມກຣາຟລາຍງານເປັນເດືອນ ແລະ ໄຕມາດ.

5. ມີການພັດທະນາເຂົ້າເຖິງ Website ດ້ວຍ QR-Code

ມະຕິທີ່ປະຊຸມ ແລະ ຂໍ້ຄິດເຫັນຮ່ວມດັ່ງນີ້:

1. ສືບຕໍ່ຂະຫຍາຍຄວາມຮ່ວມມື One Health ລະຫວ່າງເມືອງໄຊພູທອງ-ອຳເພີດອນຕານເຖິງລະດັບຊຸມຊົນໝູ່ບ້ານ
2. ເສີມຂະຫຍາຍຄວາມຮ່ວມມື One Healthລະຫວ່າງ ເມືອງໄຊບຸລີ-ອຳເພີຫວ້ານໃຫຍ່
3. ມອບໝາຍໃຫ້ທີມງານທັງສອງຝ່າຍຮ່າງ MOU ຄວາມຮ່ວມມື One Health ລະດັບແຂວງ/ຈັງຫວັດໂດຍ 3 ຂະແໜງການ (ສາທາລະນະສຸກ, ກະສິກຳ ປ່າໄມ້ ແລະ ພັດທະນາຊົນນະບົດ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ) ເພື່ອສະເໜີຂໍຄວາມຄິດເຫັນຈາກຜູ້ບໍລິຫານພະແນກການຕ່າງປະເທດ/ສຳນັກງານຈັງຫວັດຮ່ວມກັນເພື່ອໃຫ້ຜູ້ບໍລິຫານລົງນາມຄວາມຮ່ວມມືໃນການປະຊຸມຄັ້ງຕໍ່ໄປ.
4. ປັບປຸງ ແລະ ພັດທະນາ website www.msq-health.com ຕໍ່ເນື່ອງເພີ່ມເຕີມຕາມຂໍ້ສະເໜີ

ການປະຊຸມຄັ້ງນີ້ຖືວ່າເປັນສິ່ງທີ່ດີ ແລະ ມີຄວາມສຳຄັນທີ່ຈະນຳໄປສູ່ການພັດທະນາການດຳເນີນງານການເຝົ້າລະວັງພະຍາດຕິດຕໍ່ລະຫວ່າງສັດສູ່ຄົນ ຕາມແນວຊາຍແດນ ແລະ ເມືອງຄູ່ຂະໜານ ແຂວງສະຫວັນນະເຂດ-ຈັງຫວັດມຸກດາຫານ ພາຍໃຕ້ແນວຄິດສຸຂະພາບໜຶ່ງດຽວຊາຍແດນ (One health border ) ເພື່ອໃຫ້ການດຳເນີນງານບັນລຸເປົ້າ ໝາຍແຜນງານ ແລະ ກິດຈະກຳດຳເນີນການຮ່ວມກັນໃນທຸກລະດັບ ເພື່ອຊຸກຍູ້ໃຫ້ເກີດການ ເຄື່ອນໄຫວການດຳເນີນງານຕາມແນວຄິດສຸຂະພາບໜຶ່ງດຽວຢ່າງເປັນຮູບປະທຳຮ່ວມກັນຕໍ່ໄປ.

ເອກະສານກອງປະຊຸມຄັ້ງນີ້ເຮັດເປັນສອງພາສາ ລາວ, ໄທ ມີເນື້ອໃນເທົ່າທຽມກັນ ໂດຍປະທານທັງສອງຝ່າຍໄດ້ລົງລາຍເຊັນຮ່ວມກັນ ໃນວັນທີ 21 ທັນວາ 2017 ທີ່ພະແນກສາທາລະນະສຸກແຂວງສະຫວັນເຂດ

ດຣ ຕຽງຄຳ ປ້ອງວົງສາ

ຮອງຫົວໜ້າພະແນກສາທາລະນະສຸກແຂວງ

ນາຍບັນຊາ ຜະລານຸວົງ

ຜູ້ອຳນວຍການໂຮງພະຍາບານມຸກດາຫານ